ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນາຖາວອນ

----===000===------

ກະຊວງ ກະສິກຳ ແລະ ປ່າໄມ້.

ເລກທີ 0063 /ກປ

ນະຄອນຫຼວງວຽງຈັນ, ວັນທີ 27 JAN 2010

# ຂໍ້ຕົກລົງ
# ຂອງລັດຖະມົນຕີວ່າການ
# ວ່າດ້ວຍ ລະບຽບການຄຸ້ມຄອງ ແລະ ນຳໃຊ້ ແຫຼ່ງແນວພັນໄມ້ ໃນ ສປປ ລາວ.

- ອີງຕາມ ກົດໝາຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 148/ນຍ,ລົງວັນທີ 10/5/2007.
- ອີງຕາມການຕົກລົງຂອງກອງປະຊຸມສະພາວິທະຍາສາດເຕັກນິກກະສິກຳ-ປ່າໄມ້, ຄັ້ງວັນທີ 13 ຕຸລາ 2009.

## ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງດັ່ງນີ້ :

## ໝວດທີ 1.
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ.**

ລະບຽບການສະບັບນີ້ ກຳນົດມາດຕະການພື້ນຖານ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ ແຫຼ່ງພັນໄມ້ ແນໃສ່ ພັດທະນາ ແລະ ນຳໃຊ້ ແນວພັນໄມ້ ທີ່ມີ ຄຸນນະພາບ ແລະ ມີຄວາມຍືນຍົງ

**ມາດຕາ 2. ການອະທິບາຍສັບ**

1. ແຫຼ່ງແນວພັນໄມ້ພາຍເຖິງ ເນື້ອທີ່ປ່າໄມ້ໃດໜຶ່ງ ທີ່ ກຳນົດຂອບເຂດ ເພື່ອຕອບສະໜອງ ແນວພັນໄມ້;

2. ຕົ້ນໄມ້ແມ່ພັນ ໝາຍເຖິງ ຕົ້ນໄມ້ ທີ່ ຖືກຄັດເລືອກ ແລະ ຂຶ້ນບັນຊີ ເພື່ອເກັບແກ່ນ ຫຼື ຊິ້ນສ່ວນຕ່າງໆ ສໍາລັບຂະຫຍາຍພັນ;
3. ແກ່ນພັນໄມ້ ໝາຍເຖິງ ແກ່ນ ທີ່ໄດ້ຈາກຕົ້ນແມ່ພັນ ແລະ ຜ່ານຂະບວນການຈັດການ ຕາມຂັ້ນຕອນ ເພື່ອໃຫ້ໄດ້ແກ່ນພັນໄມ້ ທີ່ມີຄຸນນະພາບດີ;
4. ຊິ້ນສ່ວນ ໝາຍເຖິງ ຮາກ, ເຫງົ້າ, ເປືອກ, ກິ່ງ, ຕາ, ຍອດ, ດອກ ແລະ ໃບ ຂອງຕົ້ນແມ່ພັນ.

## ໝວດທີ 2
## ການກໍານົດພື້ນທີ່ ແລະ ການສ້າງແຫຼ່ງແນວພັນໄມ້

**ມາດຕາ 3. ການກໍານົດພື້ນທີ່.**

ແຫຼ່ງແນວພັນໄມ້ ສາມາດສ້າງຂຶ້ນໄດ້ໃນ ພື້ນທີ່ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ. ເນື້ອທີ່ແຫຼ່ງແນວພັນໄມ້ ໃນປ່າທໍາມະຊາດ ຕ້ອງມີເນື້ອທີ່ 25 ເຮັກຕາ ຂຶ້ນໄປ, ຍົກເວັ້ນ ກໍລະນີ ໄມ້ ທີ່ຫາຍາກ ແລະ ໃກ້ຈະສູນພັນ. ສໍາລັບປ່າປູກຄວນມີເນື້ອທີ່ 1 ເຮັກຕາ ຂຶ້ນໄປ.

**ມາດຕາ 4. ການສ້າງ ແລະ ຂຶ້ນທະບຽນແຫຼ່ງພັນໄມ້.**

1. ສໍາຫຼວດ ແລະ ກໍານົດພື້ນທີ່ຕົວຈິງ
2. ຄັດເລືອກ ຕົ້ນໄມ້ແມ່ພັນ
3. ເຮັດບົດບັນທຶກການນໍາໃຊ້ຮ່ວມກັບອໍານາດການປົກຄອງບ້ານ.

**ມາດຕາ 5. ແຫຼ່ງແນວພັນໄມ້.**

ເນື້ອທີ່ແຫຼ່ງແນວພັນໄມ້ ທີ່ໄດ້ຮັບຮອງແລ້ວ ແມ່ນມີເຄື່ອງໝາຍຕົ້ນຕໍ ດັ່ງນີ້:

- ປ້າຍໝາຍແຫຼ່ງແນວພັນ.
- ປ້າຍໝາຍເບີຕົ້ນໄມ້ແມ່ພັນ.
- ຫຼັກໝາຍເຂດແດນ.

## ໝວດທີ 3
## ການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ແຫຼ່ງແນວພັນໄມ້

**ມາດຕາ 6. ການຄຸ້ມຄອງ**

ລັດ ມອບໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສົມທົບ ກັບ ການຈັດຕັ້ງບ້ານ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ທີ່ ໄດ້ສ້າງຂຶ້ນ ໃນຂອບເຂດຄວາມຮັບຜິດຊອບ ຂອງ ບ້ານ ພາຍໃຕ້ການຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ຂອງ ພະແນກກະສິກຳ ແລະ ປ່າໄມ້/ຂະແໜງ ປ່າໄມ້ແຂວງ.

ແຫຼ່ງແນວພັນໄມ້ ທຸກແຫຼ່ງ ໄດ້ມີແຜ່ນທີ່, ທີ່ໄດ້ລະບຸຂອບເຂດ, ທີ່ຕັ້ງ, ຈຳນວນ ແລະ ຊະນິດພັນໄມ້ ໄວ້ຢ່າງຈະແຈ້ງ ເພື່ອໃຫ້ແຂວງ ແລະ ເມືອງ ນຳໃຊ້ເຂົ້າໃນການຕິດຕາມກວດກາ ແລະ ຄຸ້ມຄອງແຫຼ່ງແນວພັນໄມ້ ແຕ່ລະແຫຼ່ງ.

**ມາດຕາ 7. ການປົກປັກຮັກສາ**

ລັດມອບໃຫ້ການຈັດຕັ້ງບ້ານ/ກຸ່ມບ້ານ ພ້ອມດ້ວຍປະຊາຊົນ ໂດຍສົມທົບກັບຂະແໜງ ການອື່ນທີ່ກ່ຽວຂ້ອງ ດຳເນີນ ການກວດກາ ລາດຕະເວນ ເພື່ອປ້ອງກັນບໍ່ໃຫ້ມີການ ບຸກລຸກ, ທຳລາຍ, ຖາງ, ຈູດ, ຕັດໄມ້ ຫຼື ຮູບການອື່ນໆ ທີ່ ຈະມີຜົນກະທົບຕໍ່ຕົ້ນໄມ້ ແມ່ພັນ. ກໍລະນີຈຳເປັນ ທີ່ຈະຕ້ອງໄດ້ຕັດໄມ້ແມ່ພັນອອກ ຍ້ອນເກີດໄພທຳມະຊາດ ຫຼື ມີພະຍາດ ແລະ ບົ້ງແມງທຳລາຍ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງ ກະສິກຳ ແລະ ປ່າໄມ້ ເສຍກ່ອນ.

ຕົ້ນໄມ້ ແມ່ພັນ ທີ່ໄດ້ຄັດເລືອກໄວ້ ຢູ່ໃນຂອບເຂດປ່າໄມ້ທຳມະຊາດ ຫຼື ໃນສວນປູກໄມ້ ທີ່ຢູ່ໃນການຄຸ້ມຄອງ ຂອງ ບຸກຄົນນັ້ນ, ຖ້າມີຄວາມຈຳເປັນ ຕ້ອງຂຸດຄົ້ນເພື່ອນຳໃຊ້ປະໂຫຍດໄມ້ ຕ້ອງ ດຳເນີນການໄປຕາມລະບຽບການ ກ່ຽວຂ້ອງ ແລະ ໄດ້ຮັບອະນຸຍາດ ຈາກ ພະແນກກະສິກຳ ແລະ ປ່າ ໄມ້ແຂວງ ໂດຍຜ່ານ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ໜ່ວຍງານປ່າໄມ້ບ້ານ.

**ມາດຕາ 8. ການນຳໃຊ້ແຫຼ່ງແນວພັນໄມ້**

1. ລັດ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງບ້ານ ເກັບແກ່ນໄມ້ ໃນ ຂອບເຂດແຫຼ່ງແນວພັນໄມ້ ທີ່ຕົນເອງ ຄຸ້ມຄອງ ແລະ ປົກປັກຮັກສາ ຕາມລະບຽບການເກັບແກ່ນແບບມີສ່ວນຮ່ວມ.
2. ກໍລະນີ ພະນັກງານປ່າໄມ້ຈາກ ສູນກາງ, ແຂວງ, ເມືອງ ຕ້ອງການເກັບແກ່ນໄມ້ ຫຼື ຊິ້ນສ່ວນຕ່າງໆ ຂອງຕົ້ນແມ່ພັນ ຈາກແຫຼ່ງແນວພັນໃດໜຶ່ງ ຕ້ອງລົງສົມທົບອົງການຈັດຕັ້ງບ້ານກ່ຽວຂ້ອງຮ່ວມກັນຈັດຕັ້ງປະຕິບັດ.

**ມາດຕາ 9. ການຄຸ້ມຄອງແນວພັນໄມ້**

1. ການສົ່ງອອກແນວພັນໄມ້ທີ່ຫວງຫ້າມ ທີ່ມີລາຍຊື່ຢູ່ໃນບັນຊີສົນທິສັນຍາສາກົນ ຕ້ອງໄດ້ຜ່ານການເຫັນດີຂອງລັດຖະບານ.

2. ການຢັ້ງຢືນມາດຕະຖານແນວພັນໄມ້ ເພື່ອສົ່ງອອກ ແລະ ນຳເຂົ້າຕ້ອງມີຂໍ້ຕົກລົງຈາກອົງການກ່ຽວຂ້ອງ ທີ່ ກະຊວງກະສິກຳ ແລະ ປ່າໄມ້ໄດ້ມອບໝາຍ.
3. ການເຄື່ອນຍ້າຍແນວພັນໄມ້ ຈາກແຫຼ່ງແນວພັນໃດໜຶ່ງ ຕ້ອງມີການຢັ້ງຢືນຈາກ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ບ່ອນທີ່ແຫຼ່ງແກ່ນແນວພັນໄມ້ສັງກັດຢູ່.

## ໝວດທີ 4
## ສິດ ແລະ ໜ້າທີ່ ໃນການຄຸ້ມຄອງແຫຼ່ງແນວພັນໄມ້

**ມາດຕາ 10. ສິດ ແລະ ໜ້າທີ່ຂອງ ກົມ, ກອງສົ່ງເສີມ ແລະ ສະຖາບັນຄົ້ນຄວ້າ ທີ່ກ່ຽວຂ້ອງ**

1. ຊຸກຍູ້, ຕິດຕາມ ປະເມີນຜົນການຈັດຕັ້ງປະຕິບັດການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ແຫຼ່ງແນວພັນໄມ້.
2. ຝຶກອົບຮົມດ້ານວິຊາການພື້ນຖານກ່ຽວຂ້ອງໃຫ້ ແກ່ໜ່ວຍງານປ່າໄມ້ບ້ານ ເພື່ອ ຍົກປະສິດທິຜົນ ຂອງ ການຄຸ້ມຄອງ, ນຳໃຊ້ ແຫຼ່ງແນວພັນ.
3. ຄົ້ນຄວ້າ ແລະ ຢັ້ງຢືນຄຸນນະພາບແນວພັນ ເພື່ອການສົ່ງອອກ ແລະ ນຳເຂົ້າ.
4. ສົ່ງເສີມ ແລະ ນຳໃຊ້ແນວພັນໄມ້ ທີ່ໄດ້ຮັບການຢັ້ງຢືນ ລົງສູ່ການຜະລິດ.
5. ຄົ້ນຄວ້າ ວິທະຍາສາດເຕັກນິກ ເພື່ອປັບປຸງ ພັດທະນາແຫຼ່ງແນວພັນໄມ້.

**ມາດຕາ 11. ສິດ ແລະ ໜ້າທີ່ ຂອງ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ**

1. ຜັນຂະຫຍາຍ ແລະ ເຜີຍແຜ່, ແນະນຳ ລະບຽບການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້.
2. ຊຸກຍູ້, ຊີ້ນຳ, ຕິດຕາມກວດກາ ແລະ ຕິດຕາມປະເມີນຜົນການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ຂອງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ເທດສະບານ.
3. ຄຸ້ມຄອງການເຄື່ອນຍ້າຍແນວພັນ ທີ່ເກັບໄດ້ ພາຍໃນແຂວງ ຂອງຕົນ.
4. ສະຫຼຸບລາຍງານຜົນການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ໃຫ້ ກະຊວງ, ແຂວງ ແລະ ນະຄອນຫຼວງ ຢ່າງເປັນປົກກະຕິ.

**ມາດຕາ 12. ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ**

1. ຊຸກຍູ້, ຊີ້ນຳ, ຕິດຕາມ, ກວດກາ ໜ່ວຍງານປ່າໄມ້ເມືອງ, ໜ່ວຍງານປ່າໄມ້ບ້ານ ແລະ ປະຊາຊົນ ກ່ຽວກັບການຄຸ້ມຄອງ, ປົກປັກສາ, ພັດທະນາ ແລະ ນຳໃຊ້ ແຫຼ່ງແນວພັນໄມ້.

2. ສົມທົບກັບອຳນາດການປົກຄອງບ້ານ ເພື່ອໂຄສະນາເຜີຍແຜ່ ແລະ ຜັນຂະຫຍາຍ ລະບຽບການ ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ທີ່ໄດ້ຈັດສັນ ແລະ ໄດ້ຖືກຮັບຮອງ ແລ້ວ ບໍ່ໃຫ້ຖືກລົບກວນ ຫຼື ຖືກທຳລາຍ.
3. ໃຫ້ຄຳແນະນຳ, ດ້ານເຕັກນິກ ວິຊາການເພື່ອຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ໃຫ້ຖືກຕ້ອງ ແລະ ມີຄວາມຍືນຍົງ.
4. ຊຸກຍູ້, ປຸກລະດົມ ແລະ ສົ່ງເສີມໃຫ້ປະຊາຊົນ ພາຍໃນບ້ານ ເຂົ້າຮ່ວມ ແລະ ເປັນເຈົ້າການ ໃນການປົກປັກຮັກສາແຫຼ່ງແນວພັນໄມ້.
5. ສະຫຼຸບລາຍງານຜົນການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງ ຢ່າງເປັນປົກກະຕິ.

**ມາດຕາ 13. ສິດ ແລະ ໜ້າທີ່ຂອງ ອຳນາດການປົກຄອງບ້ານ**

1. ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ ໃຫ້ປະຊາຊົນເຂົ້າໃຈ ແລະ ເຊື່ອມຊຶມ ຕໍ່ລະບຽບການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້.
2. ຈັດຕັ້ງລະບົບການຄຸ້ມຄອງ, ກວດກາ, ຕິດຕາມ ເກັບກຳສະພາບການປ່ຽນແປງ ຂອງປ່າໄມ້ ແລະ ແຫຼ່ງແນວພັນໄມ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ລວມທັງສະກັດກັ້ນ ທຸກການກະທຳທີ່ເປັນການທຳລາຍແຫຼ່ງແນວພັນໄມ້ ແລະ ຊັບພະຍາກອນປ່າໄມ້, ພ້ອມທັງລາຍງານທຸກສະພາບການທີ່ເກີດຂຶ້ນ ໃຫ້ ແກ່ຫ້ອງການກະສິກຳ ແລະປ່າໄມ້ ເມືອງ ຢ່າງທັນການ.
3. ຈັດຕັ້ງກຸ່ມປະຊາຊົນ ເພື່ອເກັບແກ່ນພັນໄມ້, ຊິ້ນສ່ວນ ແລະ ຜະລິດເບ້ຍໄມ້ ທີ່ເກັບໄດ້ ຈາກແຫຼ່ງແນວພັນໄມ້ ທີ່ຕົນເອງຄຸ້ມຄອງ ເພື່ອສະໜອງໃຫ້ແກ່ຜູ້ຊົມໃຊ້.
4. ປະກອບສ່ວນ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ການລົງຕິດຕາມ ແລະ ຊຸກຍູ້ຊີ້ນຳວຽກງານກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ຂອງຂັ້ນເທິງ ກໍ່ຄືພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 14. ສິດ ແລະ ໜ້າທີ່ ຂອງ ປະຊາຊົນ**

1. ຄຸ້ມຄອງ, ປົກປັກຮັກສາ ພື້ນທີ່ແຫຼ່ງແນວພັນໄມ້ ແລະ ຕົ້ນແມ່ພັນໄມ້ ທີ່ໄດ້ຄັດເລືອກ ແລະ ຖືກຮັບຮອງແລ້ວ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງບ້ານ ໃຫ້ມີຄວາມອຸດົມສົມບູນຕະຫຼອດໄປ.
2. ເປັນເຈົ້າການໃນການຕ້ານ ແລະ ສະກັດກັ້ນການເຄື່ອນໄຫວອັນບໍ່ດີ ເຊັ່ນ: ການລັກລອບຕັດໄມ້, ຖາງປ່າ, ຈູດປ່າ ຫຼື ທຸກການກະທຳທີ່ຈະກໍ່ຜົນເສຍຫາຍ ໃຫ້ແກ່ຕົ້ນໄມ້ແມ່ພັນ ກໍ່ຄືແຫຼ່ງແນວພັນໄມ້.
3. ເຄື່ອນໄຫວເກັບແກ່ນໄມ້ ແລະ ຊິ້ນສ່ວນຕ່າງໆ ຕາມການຊີ້ນຳຂອງກຸ່ມ.

4. ລາຍງານຕໍ່ອຳນາດການປົກຄອງບ້ານ ແລະ ໜ່ວຍງານປ່າໄມ້ບ້ານ ກ່ຽວກັບ ສະພາບ ແລະ ເຫດການຕ່າງໆ ທີ່ຈະສ້າງ ຄວາມເສຍຫາຍຕໍ່ແຫຼ່ງແນວພັນໄມ້ ເຊັ່ນ: ຕັດຕົ້ນໄມ້ແມ່ພັນ, ທຳລາຍປ້າຍ ແລະ ເຄື່ອງໝາຍອື່ນໆ.

**ມາດຕາ 15. ຂໍ້ຫ້າມໃນການດຳເນີນກິດຈະກຳຕ່າງໆ ຢູ່ໃນຂອບເຂດແຫຼ່ງແນວພັນໄມ້**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດຳເນີນກິດຈະການ ຕ່າງໆ ທີ່ຢູ່ໃນຂອບເຂດແຫຼ່ງແນວພັນໄມ້ ດັ່ງລຸ່ມນີ້:

1. ຈັບຈ່ອງມອບໂອນ ແລະ ຊື້ຂາຍເນື້ອທີ່ແຫຼ່ງແນວພັນໄມ້.
2. ຕັດ ແລະ ທຳລາຍ ຕົ້ນໄມ້ ໃນຂອບເຂດ ແຫຼ່ງແນວພັນໄມ້ ທີ່ໄດ້ມີ ການກຳນົດ ແລະ ຮັບຮອງ ແລ້ວ.
3. ເຄື່ອນຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກເຂດແດນ, ປ້າຍ ຫຼື ເຄື່ອງໝາຍອື່ນໆ ທີ່ໄດ້ສ້າງຂຶ້ນໃນຂອບເຂດແຫຼ່ງແນວພັນ.
4. ຫັນປ່ຽນເນື້ອທີ່ແຫຼ່ງແນວພັນໄມ້ ທີ່ໄດ້ຖືກຮັບຮອງແລ້ວ ໄປຮັບໃຊ້ການຜະລິດໃນຮູບການອື່ນໆ. ກໍລະນີຈຳເປັນ, ພະແນກກະສິກຳ ແລະ ປ່າໄມ້ ປະຈຳ ແຂວງ, ນະຄອນຫຼວງ ຕ້ອງໄດ້ຂໍການອະນຸມັດ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້.
5. ທຸກພາກສ່ວນ ທີ່ບໍ່ມີສ່ວນຮ່ວມ ໃນການຄຸ້ມຄອງ ແລະ ປົກປັກສາ ແຫຼ່ງແນວພັນໄມ້ ເຂົ້າໄປເກັບແກ່ນໄມ້ ແລະ ເກັບຊິ້ນສ່ວນຕ່າງໆຂອງຕົ້ນແມ່ພັນ ໂດຍບໍ່ໄດ້ອະນຸຍາດ. ຍົກເວັ້ນ ກໍລະນີຈຳເປັນ ແຕ່ຕ້ອງໄດ້ຮັບການອະນຸຍາດ ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ໂດຍຜ່ານໜ່ວຍງານປ່າໄມ້ບ້ານ.

## ໝວດທີ 5
## ພັນທະ, ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 16. ພັນທະ ຕໍ່ ການຄຸ້ມຄອງແຫຼ່ງແນວພັນໄມ້**

ຜູ້ນຳໃຊ້ແຫຼ່ງແນວພັນໄມ້ ມີພັນທະດັ່ງນີ້:

1. ປົກປັກຮັກສາແຫຼ່ງແນວພັນໄມ້ ພ້ອມດ້ວຍ ຕົ້ນໄມ້ແມ່ພັນໃຫ້ ຍືນຍົງ ແລະ ອຸດົມສົມບູນ.
2. ຟື້ນຟູ ບູລະນະ ພັດທະນາແຫຼ່ງແນວພັນໄມ້ ໃຫ້ຖືກຕ້ອງຕາມຫຼັກວິຊາການ.
3. ນຳໃຊ້ແຫຼ່ງແນວພັນໄມ້ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບການທີ່ໄດ້ວາງໄວ້.
4. ນຳໃຊ້ ທຸກວິທີທາງ ໃນການສະກັດກັ້ນການທຳລາຍແຫຼ່ງແນວພັນໄມ້ທຸກຮູບການ.
5. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 17. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານ ປະກອບສ່ວນ ໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງແນວພັນໄມ້ ແມ່ນຈະໄດ້ຮັບການຍ້ອງຍໍ ແລະ ຮັບນະໂຍບາຍຕ່າງໆ ຈາກອົງການຂອງລັດ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ.

**ມາດຕາ 18. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງທີ່ຝືນຕໍ່ລະບຽບການ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ ຕາມທີ່ກຳນົດໄວ້ ໃນກົດໝາຍວ່າດ້ວຍປ່າໄມ້.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 19. ການຈັດຕັ້ງປະຕິບັດ**

ມອບໃຫ້ ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນ, ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ, ເທດສະບານ ປະສານສົມທົບ ກັບ ອຳນາດການປົກຄອງທ້ອງຖິ່ນ, ຈັດຕັ້ງປະຕິບັດເຜີຍແຜ່ ແລະ ນຳໃຊ້ລະບຽບການສະບັບນີ້.

**ມາດຕາ 20: ຜົນສັກສິດ**

ລະບຽບການ ສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້**

ກະຊວງ ກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

**ສີຕາເຮັ່ງ ຣາຊະພົນ**